**ສົມໂພດພຣະຕຣີເອກະນຸພາບ**

**ວັນທີ 16 ມິຖຸນາ 2019**



**ພຣະວໍລະສານໂດຍນັກບຸນຢວງ 16, 12-15**

ກ່ອນຈະຈາກໂລກນີ້ໄປຫາພຣະບິດາ, ພຣະເຢຊູເຈົ້າຊົງກ່າວກັບພວກລູກສິດວ່າ: ເຮົາຍັງມີຫລາຍເລື່ອງຈະບອກພວກເຈົ້າອີກ, ແຕ່ພວກເຈົ້າບໍ່ທັນສາມາດເຂົ້າໃຈໄດ້ໃນເວລານີ້. ເມື່ອພຣະຈິດເຈົ້າອົງແຫ່ງຄວາມຈິງຈະສະເດັດມາ, ພຣະອົງຈະບອກສອນຄວາມຈິງທຸກຢ່າງໃຫ້ພວກເຈົ້າ. ພຣະຈິດເຈົ້າຈະບໍ່ກ່າວດ້ວຍຕົນເອງແຕ່ຈະກ່າວຕາມທີ່ໄດ້ຊົງຍິນມາ ແລະຈະປະກາດໃຫ້ພວກເຈົ້າຮູ້ເລື່ອງທີ່ຈະເປັນມາໃນພາຍໜ້າດ້ວຍ. ພຣະອົງຈະກ່າວເປັນກຽດແກ່ເຮົາ ຍ້ອນພຣະອົງຈະຮັບທຸກສິ່ງຈາກເຮົາເພື່ອແປອະທິບາຍໃຫ້ພວກເຈົ້າຟັງ.

ທຸກສິ່ງທີ່ເປັນຂອງພຣະບິດາກໍ່ເປັນຂອງເຮົາ. ດ້ວຍເຫດນີ້, ເຮົາຈຶ່ງບອກພວກເຈົ້າວ່າ: ພຣະຈິດຈະເອົາທຸກສິ່ງມາຈາກເຮົາເພື່ອແປອະທິບາຍໃຫ້ພວກເຈົ້າຟັງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢຮ 16, 12-15**

ວັນອາທິດທີ່ຜ່ານມາພຣະກຣິສຕະຈັກໄດ້ສົມໂພດພຣະຈິດເຈົ້າສະເດັດລົງມາຊຶ່ງພວກເຮົາຮຽກວ່າ ວັນສະຫລອງແປນເຕໂກສເຕ ອັນມີຄວາມໝາຍ: ຫ້າສິບວັນຫລັງຈາກພຣະເຢຊູເຈົ້າໄດ້ກັບເປັນຄືນມາຈາກຄວາມຕາຍ. ແລະຍັງເປັນວັນທີ່ສະຫລຸບກຳນົດປາສກາອີກດ້ວຍ. ຕະຫລອດກຳນົດປາສການີ້ ພວກເຮົາໄດ້ສະຫລອງສາມເຫດການຍິ່ງໃຫຍ່ອັນແມ່ນ: ການກັບຄືນຊີບຂອງພຣະເຢຊູເຈົ້າ. ຈາກນັ້ນສີ່ສິບວັນພຣະອົງກໍສະເດັດຂຶ້ນສະຫວັນກັບຄືນເມືອຫາພຣະບິດາເພື່ອຈັດຕຽມບ່ອນໄວ້ສຳລັບພວກເຮົາ. ແລະພຣະອົງກໍຊົງສັນຍາຈະສົ່ງພຣະຈິດເຈົ້າລົງມາເພື່ອຢູ່ກັບພວກເຮົາຈົນເຖິງວັນສິ້ນໂລກ. ຜ່ານທາງສາມເຫດການນີ້ທຳໃຫ້ພວກເຮົາຕັ້ງຄຳຖາມຂຶ້ນວ່າ: ພຣະບິດາ, ພຣະເຢຊູເຈົ້າແລະພຣະຈິດເປັນສາມພຣະອົງແຕກຕ່າງກັນບໍ? ແລະສາມພຣະອົງນີ້ມາຈາກບ່ອນດຽວກັນບໍ? ສາມພຣະອົງມີໜ້າທີ່ຕ່າງກັນແນວໃດ? ແລະພວກເຮົາມີຄວາມສະໜິດສຳພັນຢ່າງໃດກັບສາມພຣະອົງນີ້?

ພວກເຮົາສາມາດພົບເຫັນຄຳຕອບຂອງຄຳຖາມເຫລົ່ານີ້ໃນວາຈາຂອງພຣະເຈົ້າຊຶ່ງພວກເຮົາໄດ້ຟັງວັນນີ້, ວັນທີ່ພຣະກຣິສຕະຈັກສົມໂພດພຣະຕຣີເອກະນຸພາບ. ນັກບຸນຢວງຜູ້ຂຽນພຣະວໍລະສານບອກໃຫ້ພວກເຮົາຮູ້ວ່າ « ເມື່ອພຣະຈິດເຈົ້າອົງແຫ່ງຄວາມຈິງຈະສະເດັດມາ, ພຣະອົງຈະບອກສອນຄວາມຈິງທຸກຢ່າງໃຫ້ພວກເຮົາຮູ້ ». ຄວາມຈິງນີ້ແມ່ນຫຍັງ? ແລະຄວາມຈິງນີ້ມາຈາກໃສ? ແນ່ນອນ, ຄວາມຈິງນີ້ແມ່ນອົງພຣະເຢຊູເຈົ້ານັ້ນເອງ. ເພາະ « ພຣະອົງເປັນຫົນທາງ, ຄວາມຈິງແລະຊີວິດ » (ຢຮ 14, 6). ແລະຄວາມຈິງໃນຕົວຂອງພຣະເຢຊູເຈົ້າຄືພຣະອົງແມ່ນພຣະບຸດຂອງພຣະບິດາເຈົ້າແລະພຣະອົງໄດ້ຖືກສົ່ງມາໃນໂລກນີ້ເພື່ອບອກໃຫ້ພວກເຮົາຮູ້ວ່າພຣະບິດາຊົງຮັກພວກເຮົາແຕ່ລະຄົນ. ແລະຄວາມຮັກນີ້ໄດ້ບັນລຸເຖິງຈຸດສຸດຍອດອັນແມ່ນການສະຫລະຊີວິດຂອງພຣະເຢຊູເຈົ້າເອງພຣະບຸດອົງດຽວຂອງພຣະບິດາເພື່ອໄຖ່ບາບພວກເຮົາ. ແລະພວກເຮົາຈະເຂົ້າໃຈຄວາມຮັກນີ້ໄດ້ກໍດ້ວຍອາໄສຄວາມສະວ່າງຈາກອົງພຣະຈິດເຈົ້າ. ເພາະບໍ່ມີໃຜສາມາດຈະກ່າວໄດ້ວ່າ: « ພຣະເຢຊູເປັນພຣະອົງເຈົ້າຖ້າພຣະຈິດເຈົ້າບໍ່ດົນໃຈໃຫ້ເວົ້າ » (1 ກຣ 12, 3). ແລະພຣະເຢຊູເຈົ້າເອງກໍໄດ້ກ່າວວ່າ: « ຜູ້ໃດເຫັນເຮົາ ກໍແມ່ນເຫັນຜູ້ທີ່ໄດ້ຊົງໃຊ້ເຮົາມາ » (ຢຮ 12, 45). ໝາຍວ່າພຣະບິດາ, ພຣະບຸດແລະພຣະຈິດ, ເຖິງວ່າສາມພຣະອົງຈະມີໜ້າທີ່ແຕກຕ່າງກັນ, ແຕ່ທັງສາມລ້ວນແຕ່ມີຄວາມສະໜິດສຳພັນເປັນໜຶ່ງດຽວກັນ.

ດັ່ງນັ້ນ, ທຸກຄັ້ງເມື່ອພວກເຮົາທຳເຄື່ອງໝາຍກາງເຂນ, ເມື່ອພວກເຮົາສວດມົນພາວະນາແລະເປັນຕົ້ນເມື່ອພວກເຮົາຮັບເອົາພຣະເຢຊູເຈົ້າເຂົ້າມາໃນຈິດໃຈຂອງພວກເຮົາ ແມ່ນພວກເຮົາໄດ້ເຂົ້າຮ່ວມໃນຄວາມສະໜິດສຳພັນກັບພຣະຕຣີເອກະນຸພາບ. ແລະໝາກຜົນແຫ່ງຄວາມເປັນໜຶ່ງດຽວກັບພຣະຕຣີເອກະນຸພາບນີ້ຈະທຳໃຫ້ພວກເຮົາມີຄວາມຮັກສາມັກຄີກັບເພື່ອນພີ່ນ້ອງຂອງພວກເຮົາ.

ຂໍໃຫ້ພຣະຈິດເຈົ້າອົງແຫ່ງຄວາມຈິງຈົ່ງສ່ອງສະວ່າງຈິດໃຈຂອງພວກເຮົາ ເພື່ອພວກເຮົາຈະໄດ້ເຂົ້າໃຈເຖິງຄວາມຮັກຂອງພຣະບິດາ, ພຣະຄຸນແຫ່ງການໄຖ່ກູ້ຂອງພຣະເຢຊູກຣິສໂຕແລະຄວາມສຳພັນຂອງພຣະຈິດທີ່ມີຕໍ່ພວກເຮົາແຕ່ລະຄົນນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ